ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 242 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 02/04/2010

# ຂໍ້ຕົກລົງ

## ກ່ຽວກັບການດັດແກ້ການຫັກເງິນແຮສຳລັບການສູນເສຍເງິນກູ້ລວມ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມຂໍ້ກຳນົດກ່ຽວກັບການຈັດຊັ້ນໜີ້ຂອງທະນາຄານທຸລະກິດ ສະບັບເລກທີ 06/ທຫລ, ລົງວັນທີ 11 ພຶດສະພາ 2004;
- ອີງຕາມຂໍ້ຕົກລົງກ່ຽວກັບການຫຼຸດອັດຕາເງິນແຮສຳລັບການສູນເສຍເງິນກູ້ລວມ ສະບັບເລກທີ 342/ທຫລ, ລົງວັນທີ 13 ພຶດສະພາ 2008;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

ໃນໄລຍະຜ່ານມາ ທະນາຄານ ແຫ່ງ ສປປ ລາວ ໄດ້ປັບປຸງອັດຕາສ່ວນເງິນແຮສຳລັບການສູນເສຍເງິນກູ້ລວມ ໃຫ້ສອດຄ່ອງກັບນະໂຍບາຍເງິນຕາຂອງທະນາຄານ ແຫ່ງ ສປປ ລາວ ທີ່ໄດ້ວາງອອກໃນແຕ່ລະໄລຍະ ແລະ ເພື່ອຮັບປະກັນຄວາມໝັ້ນຄົງຂອງທະນາຄານທຸລະກິດ. ການກຳນົດອັດຕາສ່ວນເງິນແຮສຳລັບການສູນເສຍເງິນກູ້ລວມ ໃນໄລຍະຜ່ານມາໄດ້ກຳນົດເປັນອັດຕາດຽວ 0,5% ຂອງຍອດສິນເຊື່ອປົກກະຕິ ຊຶ່ງທຸກທະນາຄານທຸລະກິດຕ້ອງປະຕິບັດ.

ເພື່ອໃຫ້ມີຄວາມຍືດຍຸ່ນ ແລະ ເພີ່ມຄວາມເປັນເຈົ້າການຂອງບັນດາທະນາຄານທຸລະກິດ ໃນການປ້ອງກັນຄວາມສ່ຽງໃນຂົງເຂດວຽກງານສິນເຊື່ອເວົ້າລວມ, ເວົ້າສະເພາະ ແມ່ນການກຳນົດອັດຕາສ່ວນເງິນແຮເພື່ອການສູນເສຍເງິນກູ້ລວມ ໃນຂອບເຂດທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕົກລົງ:**

**ມາດຕາ 1.** ດັດແກ້ມາດຕາ 1 ຂອງຂໍ້ຕົກລົງ ສະບັບເລກທີ 342/ທຫລ, ລົງວັນທີ 13 ພຶດສະພາ 2008 ດັ່ງນີ້:

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

ໃຫ້ບັນດາທະນາຄານທຸລະກິດ ລວມທັງສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ ຫັກເງິນແຮສຳລັບການສູນເສຍເງິນກູ້ລວມ ໃນອັດຕາ 0,5% ຫາ 1% ຂອງຍອດສິນເຊື່ອປົກກະຕິ.

ບັນດາທະນາຄານທຸລະກິດ ລວມທັງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງລາຍງານອັດຕາສ່ວນເງິນແຮສຳລັບການສູນເສຍເງິນກູ້ລວມ ທີ່ທະນາຄານຕົນປະຕິບັດໃຫ້ທະນາຄານ ແຫ່ງ ສປປ ລາວ ຊາບ ພາຍໃນກຳນົດເວລາ 30 ວັນ, ນັບແຕ່ມື້ທີ່ຂໍ້ຕົກລົງສະບັບນີ້ ມີຜົນສັກສິດເປັນຕົ້ນໄປ.

**ມາດຕາ 2.** ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 342/ທຫລ, ລົງວັນທີ 13 ພຶດສະພາ 2008.

**ມາດຕາ 3.** ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ບັນດາທະນາຄານທຸລະກິດ ລວມທັງສາຂາທະນາຄານທຸລະກິດຕ່າງປະເທດ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ພູເພັດ ຄຳພູນວົງ